ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 05 /ສພຂ.ຊຍ
ໄຊຍະບູລີ, ວັນທີ 13 ມັງກອນ 2024

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ບົດສະຫຼຸບການເຄື່ອນໄຫວ ວຽກງານ ປີ 2023, ຜົນການກວດກາຕາມຜົນຂອງການກວດສອບ ປະຈໍາປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປີ 2024 ຂອງ ອົງການກວດກາລັດແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ແລະ ມາດຕາ 59;
- ອີງຕາມ ບົດລາຍງານຂອງອົງການກວດກາລັດແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາ ປະຊາຊົນແຂວງ ຊຸດທີ II ສະບັບເລກທີ 768/ອກລ.ຊຍ, ລົງວັນທີ 6 ທັນວາ 2023.

ຜ່ານການປະກອບຄໍາເຫັນ, ຄົ້ນຄວ້າ ພິຈາລະນາຢ່າງເລິກເຊິ່ງ ຂອງ ສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ປະຈໍາປີ 2023, ຜົນການກວດກາຕາມຜົນຂອງການກວດສອບ ປະຈໍາປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປີ 2024 ຂອງອົງການກວດກາລັດແຂວງ. ໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາ ບົດລາຍງານ ຂອງ ອົງການກວດກາລັດແຂວງ ກ່ຽວກັບ ການເຄື່ອນໄຫວວຽກງານ ປີ 2023 ແລະ ຜົນການກວດກາ ຕາມຜົນຂອງການກວດສອບ ປະຈໍາປີ 2022.

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດກາລັດແຂວງ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023 ຂອງຕົນໃນເງື່ອນໄຂສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ແຕ່ກໍ່ສາມາດຍາດໄດ້ຜົນສໍາເລັດຫຼາຍດ້ານ ເປັນຕົ້ນ: ຕິດຕາມ-ກວດກາຊຸກຍູ້ ຄະນະປະສານງານຂັ້ນແຂວງແກ້ໄຂຜົນຂອງການກວດສອບ ຕາມມາດຕະການ ແລະ ການແນະນໍາຂອງອົງການກວດສອບປະຈໍາພາກເໜືອ1, ຕາມມະຕິສະພາປະຊາຊົນແຂວງ ສະບັບເລກທີ 07/ສພຂ.ຊຍ ວັນທີ 16 ກຸມພາ 2023 ຈໍານວນ 22 ກໍລະນີ, ໃນນັ້ນ: ໄດ້ຮັບການປັບປຸງແກ້ໄຂຂາດຕົວມີ 3 ກໍລະນີ (ກໍລະນີທີ່ຍົກມາແຕ່ ປີ 2018 ມີ 1 ກໍລະນີ ແລະ ປີ 2021 ມີ 2 ກໍລະນີ) ບັນຫາທີ່ໄດ້ປັບປຸງແກ້ໄຂແຕ່ຍັງບໍ່ທັນຂາດຕົວມີ 19 ກໍລະນີ.

ມາດຕາ 2 ຮັບຮອງເອົາ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2024.

ກອງປະຊຸມ ເຫັນດີເປັນເອກະພາບ ຕໍ່ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ຂອງອົງການກວດກາລັດແຂວງ ເປັນຕົ້ນ: ກໍລະນີທີ່ຍັງຄ້າງແກ່ຍາວມາຫຼາຍປີ ແລະ ກໍລະນີເກີດຂຶ້ນໃໝ່ ທີ່ຈະຕ້ອງໄດ້ຮັບການຊຸກຍູ້ ປັບປຸງແກ້ໄຂໃຫ້ຂາດຕົວໃນຕໍ່ໜ້າ ຈຳນວນ 24 ກໍລະນີ; ໃນນັ້ນ: ຄ້າງສະສົມແຕ່ສົກປີ 2015-2016 ຈຳນວນ 6 ກໍລະນີ, ປີ 2017 ຈຳນວນ 1 ກໍລະນີ, ປີ 2018 ຈຳນວນ 3 ກໍລະນີ, ປີ 2019 ຈຳນວນ 1 ກໍລະນີ, ປີ 2020 ຈຳນວນ 1 ກໍລະນີ, ປີ 2021 ຈຳນວນ 7 ກໍລະນີ ແລະ ກໍລະນີທີ່ກວດສອບພົບເຫັນໃໝ່ ໃນປີ 2022 ຈຳນວນ 5 ກໍລະນີ ຄື: (1) ການຄຸ້ມຄອງພາຫະນະທີ່ຖືກຍຶດເປັນຂອງລັດ, (2) ການທັບຊັບສິນເປັນທຶນ, (3) ການວາງເງິນຄ້ຳປະກັນໂຄງການ (4) ການຄຸ້ມຄອງໜີ້ຕ້ອງຮັບຈາກພັນທະຂອງຜູ້ລົງທຶນ, (5) ການຄຸ້ມຄອງຊັບສິນຖືກຮິບເປັນຂອງລັດ ທີ່ແກ້ໄຂບໍ່ຂາດຕົວໃຫ້ມີຄວາມຄືບໜ້າ ແລະ ສຳເລັດ ຕາມລະບຽບກົດໝາຍ.

ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວປະຈຳປີ 2024.

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງ ອົງການກວດກາລັດແຂວງ ໃຫ້ໄດ້ຮັບຜົນສຳເລັດ ຕາມຈຸດປະສົງ ແລະ ລະດັບຄາດໝາຍ, ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມດັ່ງນີ້:

1. ມອບໃຫ້ອົງການປົກຄອງແຂວງ:
   1.1 ນຳພາ-ຊີ້ນຳແກ້ໄຂຜົນຂອງການກວດກາ ໃຫ້ເປັນຮູບປະທຳຂຶ້ນກ່ວາເກົ່າ ແລະ ໃຫ້ຖືເອົາການແກ້ໄຂຜົນຂອງການກວດກາ ເປັນມາດຕະຖານໃນການປະເມີນບຸກຂະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ;
   1.2 ຊີ້ນຳພາກສ່ວນທີ່ກ່ຽວຂ້ອງ ເກັບກູ້ຊັບສິນຈາກຜົນຂອງການກວດກາ ບຸກຄົນ ແລະ ການຈັດຕັ້ງ ໃນໄລຍະຜ່ານມາລວມສູນເຂົ້າງົບປະມານແຫ່ງລັດ;
   1.3 ສືບຕໍ່ຊີ້ນຳຂະແໜງການຂອງແຂວງ, ເມືອງ ໃຫ້ເພີ່ມຄວາມຮັບຜິດຊອບ ໃນການຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນທີ່ຈຳເປັນ ເຂົ້າຮ່ວມວຽກງານກວດກາລັດແຂວງ ຢ່າງຕັ້ງໜ້າ ແລະ ຕັ້ງໜ້າແກ້ໄຂຜົນຂອງການກວດກາ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເຂັ້ມງວດ;
   1.4 ມອບໃຫ້ອົງການປົກຄອງແຂວງ ສະໜອງງົບປະມານໃນການເຄື່ອນໄຫວວຽກງານ ໃຫ້ອົງການກວດກາລັດແຂວງ ຕາມຄວາມເໝາະສົມ.
2. ມອບໃຫ້ອົງການກວດກາລັດແຂວງ:
   2.1 ສືບຕໍ່ປະສານສົມທົບ ກັບອົງການກວດສອບປະຈຳພາກເໜືອ1 ໃຫ້ເລິກເຊິ່ງ, ມີຄວາມກົມກຽວ ແລະ ຄ່ອງຕົວຫຼາຍຂຶ້ນກວ່າເກົ່າ, ໂດຍສະເພາະການແລກປ່ຽນບົດຮຽນ, ການສະໜອງຂໍ້ມູນ ແລະ ເຂົ້າຮ່ວມແກ້ໄຂຜົນການກວດກາ ທີ່ຍັງຄ້າງໃນໄລຍະຜ່ານມາໃຫ້ຂາດຕົວ ແລະ ສຳເລັດໂດຍໄວ;
   2.2 ເພີ່ມທະວີການຕິດຕາມ, ຊຸກຍູ້ ແກ້ໄຂຜົນການກວດກາ ຕາມຜົນຂອງການກວດສອບ ໃຫ້ເຂັ້ມງວດຂາດຕົວ ແລະ ສຳເລັດໂດຍໄວ; ໃນກໍລະນີ ມີການລະເມີດທາງແພ່ງ ຫຼື ອາຍາ ຕ້ອງສົ່ງສຳນວນເອກະສານ ກວດກາ ໃຫ້ ອົງການທີ່ກ່ຽວຂ້ອງສັ່ງຟ້ອງ ຕາມກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ ປີ 2017);
   2.3 ເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳ ຊີ້ນຳການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ມີປະສິດທິຜົນຕິດຕາມກວດກາ ຄວາມສອດຄ່ອງ ແລະ ຄວາມສັກສິດໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ ຕິດພັນກັບວຽກງານ

ກວດກາພ້ອມທັງຊຸກຍູ້ອົງການປົກຄອງແຂວງ, ເມືອງ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ວຽກງານກວດກາ ໃຫ້ມີປະສິດທິພາບ, ປະສິດທິຜົນ;

2.4 ໃຫ້ອົງການກວດກາລັດ ເປັນເຈົ້າການປະສານສົມທົບ ກັບອົງການຄຸ້ມຄອງເປົ້າໝາຍທີ່ຖືກກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຜົນຂອງການກວດກາ ໃນໄລຍະຜ່ານມາ ພ້ອມທັງໄຈ້ແຍກຜົນຂອງການກວດກາອັນໃດສາມາດແກ້ໄຂໄດ້ ຫຼື ບໍ່ມີຕົວຕົນ ໃຫ້ໄຈ້ແຍກລະອຽດແລ້ວນຳສະເໜີ ຕໍ່ຄະນະປະຈຳສະພາປະຊາຊົນແຂວງ ກ່ອນກອງປະຊຸມສະໄໝສາມັນ ເທື່ອທີ 8.

## ມາດຕາ 4 ການຈັດຕັ້ງປະຕິບັດ.

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການອ້ອມຂ້າງແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການກວດກາລັດແຂວງ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກຳມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

## ມາດຕາ 5 ຜົນສັກສິດ.

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ